# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດທີ 5 ກຸມພາ 2017 (02-05-2017)

### ຕິດຕາມດ້ວຍຄວາມຍິນດີ

ດົນປານໃດແລ້ວທີ່ທ່ານຈຳເປັນແທ້ໆ ຕ້ອງປັບປຸງແກ້ໄຂທັສນະທ່າທີ?

**ຈຸດສຳຄັນໃນບົດຮຽນ**: ພວກເຮົາສາມາດດຳລົງຊີວິດຢູ່ໃນຄວາມຮັກແລະຄວາມຖ່ອມຕົນ, ເໝືອນດັ່ງທີ່ພຣະເຢຊູໄດ້ຊົງກະທຳ.

**ພຣະຄັມພີຕອບສນອງຕໍ່ຊີວິດ**:

ຂ້າພະເຈົ້າໄດ້ເຂົ້າໄປໃນຮ້ານສິນຄ້າສະດວກຊື້ເພື່ອຈະຊື້ນ້ຳຂວດນຶ່ງ. ຜູ້ຄິດເງິນຖາມຂ້າພະເຈົ້າວ່າ "ເຈົ້າມາແຕ່ໃສ? ເບິ່ງຊົງວ່າເຈົ້າຄົງຈະບໍ່ມາຈາກແຖວໆນີ້." ຂ້າພະເຈົ້າໄດ້ຕອບລາວວ່າ "ຂ້ອຍຢູ່ນອດຄາໂຣໄລນາ." ລາວຊ້ຳເວົ້າຕໍ່ອີກວ່າ "ເຈົ້າເບິ່ງຄືດາຣາຊື່ດັງ ພີທບູລ. ເຈົ້າຮູ້ຈັກວ່າລາວແມ່ນໃຜບໍ່?" "ຮູ້ຈັກໂດຍບໍ່ເປັນການສ່ວນຕົວ ແຕ່ຂ້ອຍຮູ້ວ່າລາວແມ່ນໃຜ." ຂ້າພະເຈົ້າຕອບລາວ.

ຕໍ່ມາ, ຜູ້ຄິດເງິນໜ້າຕື້ຊ້ຳຜັດຖາມຂ້າພະເຈົ້າອີກວ່າ "ເຈົ້າແຕ່ງງານຫຼືຍັງ?" ຂ້າພະເຈົ້າຕອບລາວ "ແຕ່ງແລ້ວ, ດ້ວຍຄວາມສຸກ". ລາວຊ້ຳຜັດດັນຖາມອີກວ່າ "ເປັນຫຍັງເຈົ້າຈຶ່ງແຕ່ງງານ?, ເຈົ້າອາຍຸຈັກປີແລ້ວ?" ຂ້າພະເຈົ້າຕອບລາວອີກ "37 ປີແລ້ວ". ລາວເວົ້າຕື່ມ "ເຈົ້າແຕ່ງງານແຕ່ຍັງໜຸ່ມໂພດ. ຖານະທີ່ເປັນຜູ້ຊາຍຕ້ອງຫຼິ້ນໃຫ້ສຸດໃຈກ່ອນຈຶ່ງແຕ່ງງານ". ຂ້າພະເຈົ້າຍິ້ມແລ້ວຕອບລາວຢູ່ໃນໃຈວ່າ "*ເຈົ້າຕ້ອງການພຣະເຢຊູ ແລະຈຳເປັນຕ້ອງມີເມັຽ*"

ຫວນຄືນຫຼັງ, ຂ້ອຍເສັຽດາຍບໍ່ໄດ້ບອກໃຫ້ລາວອ່ານພຣະຄັມພີຟີລິບປອຍ ບົດທີ 2. ໃນພຣະຄຳຕອນນີ້, ພວກເຮົາໄດ້ເຫັນແນວໂນ້ມທີ່ຖືກຕ້ອງແລະເໝາະສົມໃນການດຳລົງຊີວິດ. ໂດຍສະເພາະ ຊີວິດບໍ່ແມ່ນການຕອບສນອງຕັນຫາ (ຄວາມຢາກ, ຄວາມໂລພາ), ແຕ່ແມ່ນການຕິດຕາມອົງພຣະເຢຊູດ້ວຍຄວາມສຸກ (ຄວາມຍິນດີ) ແລະເຊີດຊູສັຣເສີນພຣອົງຜູ້ຊົງເສັຽສລະພຣະຊົນເພື່ອພວກເຮົາ.

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2 ແລະ 3)

### ການສຶກສາພຣະຄັມພີ

**1. <u>ຟີລິບປອຍ 2:1-2</u>**

*[1]ເຫດສະນັ້ນຖ້າຊີວິດທີ່ໄດ້ໃນພຣະຄຣິດອຳນວຍການຊູກຳລັງໃຈ, ຖ້າມີຄວາມເລົ້າໂລມໃຈປະການໃດໃນຄວາມຮັກ, ຖ້າມີສ່ວນຮ່ວມໃຈກັບພຣະວິນຍານປະການໃດ, ຖ້າມີຄວາມເມດຕາເອັນດູປະການໃດ. [2]ກໍຂໍໃຫ້ເຈົ້າທັງຫຼາຍເຮັດໃຫ້ຄວາມຍິນດີຂອງເຮົາຄົບຖ້ວນດ້ວຍການທີ່ມີຄວາມຄິດຢ່າງດຽວກັນ, ມີຄວາມຮັກຢ່າງດຽວກັນ, ມີໃຈຮ່ວມສາມັກຄີເປັນນ້ຳໜຶ່ງໃຈດຽວກັນ.*

ການຕິດຕາມພຣະເຢຊູບໍ່ແມ່ນການກະທຳໂດຍໂດດດ່ຽວ. ພວກເຮົາເຕີບໃຫຍ່ໃນອົງພຣະເຢຊູໂດຍການຕິດຕໍ່ພົວພັນກັບຊາວຄຣິສຕຽນອື່ນໆທີ່ຕິດຕາມພຣະອົງ. ໃນພຣະຄຳຕອນນີ້ ອາຈານໂປໂລໄດ້ໃຫ້ຄວາມຈູງໃຈສີ່ຢ່າງ

ກ່ຽວກັບຄວາມສາມັກຄີເປັນນໍ້າໜຶ່ງໃຈດຽວກັນລະຫວ່າງຜູ້ທີ່ເຊື່ອ. ພວກເຮົາມອງເຫັນສິ່ງເຫຼົ່ານີ້ໃນລັກສະນະທີ່ເປັນຂໍ້ແມ້ "ຖ້າວ່າ...", ຊຶ່ງພວກເຮົາອາດເຂົ້າໃຈດີກວ່າໃນຄວາມໝາຍທີ່ວ່າ "ຕັ້ງແຕ່..." ຫຼື "ເພາະວ່າ.." ເງື່ອນໄຂ "ຖ້າວ່າ..." ໃນກໍຣະນີນີ້ໝາຍເຖິງຄວາມແນ່ນອນ ບໍ່ແມ່ນໝາຍເຖິງຄວາມເປັນໄປໄດ້. ຄວາມຈູງໃຈສີ່ຢ່າງສໍາຫຼັບຄວາມສາມັກຄີຂອງຊາວຄຣິສຕຽນມີດັ່ງຕໍ່ລົງໄປນີ້:

- **ກໍາລັງໃຈໃນພຣະເຢຊູ.** ພວກເຮົາໄດ້ຮັບພຣະພອນໂດຍການໄດ້ພົບກັບພຣະອົງແລະຮູ້ຈັກພຣະອົງ (ບົດທີ 3 ຂໍ້ 9-10). ຖ້າມກາງການທົດລອງແລະຄວາມທຸກທໍຣະມານ, ພວກເຮົາພົບກໍາລັງໃຈໃນຄວາມສັມພັນກັບອົງພຣະເຢຊູ.
- **ການໂລມໃຈຂອງຄວາມຮັກ.** ພວກທີ່ມີຄວາມເຊື່ອໄດ້ມີປະສົບການໃນຄວາມຮັກຂອງອົງພຣະເຢຊູ, ແລະການທີ່ມີປະສົບການຮ່ວມກັນນີ້ພາໃຫ້ເຮົາຮັກຊຶ່ງກັນແລະກັນ.
- **ການສາມັກຄີທັມກັບພຣະວິນຍານບໍຣິສຸດ.** ພຣະວິນຍານບໍຣິສຸດເຮັດໃຫ້ພວກເຮົາເປັນອ້າຍເອື້ອຍນ້ອງກັນ (ເບິ່ງ ຂໍ້ 1:27), ຫຸ້ນສ່ວນນໍາກັນໃນຂ່າວປະເສີດ (ເບິ່ງໂຢຮັນຂໍ້ 16:13-15), ນໍາພາໃນການຮັບໃຊ້ແລະນະມັສການ (ເບິ່ງຟີລິບປອຍ ຂໍ້ 3:3), ຊ່ວຍເຫຼືອກັນໃນຍາມອ່ອນພລັງ (ເບິ່ງ ໂຣມ ຂໍ້ 8:26), ການແຕກແຍກໄດ້ເປັນພັຍຂົ່ມຂູ່ຄຣິສຕະຈັກຊາວຟີລິບປອຍ (ເບິ່ງຟີລິບປອຍ ຂໍ້ 4:2-3), ດັ່ງນັ້ນອາຈານໂປໂລຈຶ່ງໄດ້ເຕືອນພວກເຂົາໃຫ້ຮ່ວມສາມັກຄີທັມກັນໂດຍພຣະວິນຍານບໍຣິສຸດ.
- **ການແບ່ງປັນຄວາມຮັກແລະຄວາມເມດຕາ.** ຊາວຄຣິສຕຽນແບ່ງປັນປະສົບການຮ່ວມກັນໃນການເປັນເຄື່ອງຂອງຄວາມເມດຕາຂອງພຣະເຈົ້າ ຊຶ່ງສົມຄວນເປັນເຫດໃຫ້ພວກເຮົາທັງລາຍໃຫ້ເບິ່ງເຫັນຜົນປໂຍດຂອງຄົນອື່ນ (ເບິ່ງ ຟີລິບປອຍ ຂໍ້ 2:4).

ອາຈານໂປໂລໄດ້ໃຫ້ຄໍາໜູນໃຈແກ່ຊາວຟີລິບປອຍໃຫ້ມີຄວາມສັດຊື່, ຈິດຈໍາ, ສໍານຶກຕົນເອງ, ແລະເຮັດພັນທະກິດຮ່ວມກັນ ໃນຖານະເປັນຜູ້ຕິດຕາມພຣະເຢຊູ ພວກເຮົາມີຄວາມສຸກໃນການເຕີບໃຫຍ່ຮ່ວມກັນໃນຈຸດປະສົງແລະໃນຄວາມຮັກຂອງອົງພຣະຄຣິດ.

| ເປັນດ້ວຍເຫດໃດຄວາມສາມັກຄີຈຶ່ງເປັນສິ່ງສໍາຄັນໃນຄຣິສຕະຈັກ? |
|---|

## 2. <u>ຟີລິບປອຍ 2:3-4</u>

*[3]ຢ່າເຮັດສິ່ງໃດໃນທາງຊິງດີຫລືຖືດີກັນ ແຕ່ຈົ່ງຖ່ອມໃຈລົງຖືວ່າຄົນອື່ນດີກວ່າຕົນ. [4]ຢ່າໃຫ້ຜູ້ໃດເຫັນແກ່ປໂຍດຂອງຕົນຝ່າຍດຽວ ແຕ່ຈົ່ງເຫັນແກ່ປໂຍດຂອງຄົນອື່ນດ້ວຍ.*

ເພື່ອໃຫ້ຄຣິສຕະຈັກໄດ້ສັມຜັດຄວາມສາມັກຄີ, ພວກເຮົາຈໍາເປັນຕ້ອງສແວງຫາຄວາມຖ່ອມໃຈ. ເພື່ອໃຫ້ເຫັນແຈ້ງຫລາຍກວ່ານັ້ນ ພວກເຮົາຈໍາເປັນຕ້ອງສແວງຫາຄວາມຖ່ອມໃຈທີ່ຄ້າຍຄືກັບພຣະຄຣິດ.

ຜູ້ທີ່ມີຄວາມຖ່ອມໃຈຍ່ອມຫຼີກລ້ຽງ "ການຊິງດີແລະການຖືດີກັນ". ຄໍາວ່າ "ການຖືດີ" ຕີຄວາມໝາຍເຖິງການຍົ່ງຜຍອງ, ຄວາມໂອ້ອວດ, ຄວາມທະນົງຕົວ, ແລະຄວາມຖືຕົວ. ມະນຸດມັກຖືດີໂດຍໄຮ້ສາຣະ! ອົງພຣະເຢຊູໄດ້ຊົງສະແດງໃຫ້ເຫັນທາງກົງກັນຂ້າມ. ການຖ່ອມໃຈ, ພວກເຮົາຕ້ອງປະຖິ້ມການຖືດີກັນແລະສແວງຫາພຣະສະຕິປັນຍາຂອງອົງພຣະເຢຊູ. ອາຈານໂປໂລບອກຄຣິສຕະຈັກບໍ່ໃຫ້ເຫັນແກ່ຕົວຄືໃຫ້ຄິດເຫັນຜົນປໂຍດຂອງຄົນອື່ນນໍາ. ໃນວິຖີຊີວິດສມັຍປັດຈຸບັນຊຶ່ງເຕັມໄປດ້ວຍການເຫັນແກ່ຕົວ, ເປັນການຍາກຫຼາຍທີ່ຈະຄິດເຫັນແກ່ຄົນອື່ນ. ພວກເຮົາຈະຝຶກຝົນຊີວິດດ້ວຍວິທີໃດໃນການດໍາລົງຊີວິດດ້ວຍຄວາມຖ່ອມໃຈ? ຈົ່ງພິຈາຣະນາເບິ່ງຄໍາແນະນໍາຂ້າງລຸ່ມນີ້:

- **ຈົ່ງສະທ້ອນໄມ້ກາງແຂນຂອງພຣະເຢຊູ.** ໃນພຣະຄັມພີຟີລິບປອຍ 2:5-11, ອາຈານໂປໂລໄດ້ເຮັດໃຫ້ພວກເຮົາເຫັນພາບທີ່ຫນ້າສົນໃຈຂອງຄວາມອ່ອນນ້ອມຖ່ອມໃຈທີ່ດີທີ່ສຸດ. ພຣະເຢຊູໄດ້ຊົງສະເດັດມາໃນໂລກດ້ວຍລັກສະນະມະນຸດໂດຍມີພຣະປະສົງສະລະພຣະຊົນເທິງໄມ້ກາງແຂນເພື່ອພວກເຮົາທຸກຄົນ.
- **ຈົ່ງສະທ້ອນພຣະສະງ່າຣາສີຂອງພຣະເຢຊູ.** ຂໍ້ 5-11 ໄດ້ຊີ້ບອກເໝືອນກັນເຖິງຄວາມສູງສົ່ງແລະຄວາມຖ່ອມພຣະອົງ, ຄວາມສາລະພາບຍອດຍິ່ງ, ແລະການນະມັສການຂອງພຣະເຢຊູ. ເປັນສິ່ງທີ່ເຮັດໃຫ້ການຄອບຄອງຂອງພຣະຄຣິດໃຫ້ໄດ້ເປັນແຮງດົນໃຈທ່ານໃຫ້ຖ່ອມໃຈລົງຄຸກເຂົ່າແລະນະມັສການພຣະອົງ.
- **ຈົ່ງສະທ້ອນພຣະຄໍາຂອງພຣະເຈົ້າ.** ພຣະຄັມພີໄດ້ເປີດເຜີຍພຣະເຢຊູຄຣິດ. ການສຶກສາພຣະຄໍາພຣະເຈົ້າສາມາດເປັນການສະແດງອອກເຖິງການຖ່ອມໃຈໄປໃນຕົວ ຖ້າຫາກທ່ານອ່ານພຣະຄັມພີດ້ວຍທ່າທີທີ່ບອກວ່າ: "ຂ້ານ້ອຍມີຄວາມຫິວກະຫາຍໃນພຣະຄໍາຂອງພຣະອົງ".
- **ຈົ່ງສແວງຫາພຣະເຈົ້າໃນຄໍາອະທິຖານ.** ພວກເຮົາຕ້ອງຖ່ອມໃຈຕົນເອງເປັນປົກຕິຢູ່ໃຕ້ພຣະພັກແລະພຣະຫັດພຣະເຈົ້າແລະມອບໃຫ້ພຣະອົງຊົງດູແລ (1 ເປໂຕ 5:6-7). ເມື່ອພວກເຮົາອະທິຖານ, ພວກເຮົາຮັບຮູ້ດ້ວຍຄວາມຖ່ອມໃຈໃນຄວາມບໍ່ສາມາດທີ່ຈະຕອບສນອງຄວາມຈໍາເປັນດ້ວຍຕົນເອງ.
- **ຈົ່ງບົວລະບັດຮັບໃຊ້.** ພວກເຮົາຈະເຣີນເຕີບໃຫຍ່ດ້ວຍຄວາມຖ່ອມໃຈໃນເມື່ອພວກເຮົາບົວລະບົດຮັບໃຊ້ຄົນອື່ນແລະໃຫ້ຄວາມສົນໃຈແລະຜົນປໂຍດຂອງຄົນອື່ນນັ້ນຫຼາຍກວ່າຂອງຕົນເອງ.

| |
|---|
| ຈະມີຜົນສະທ້ອນແນວໃດເມື່ອຄົນເຮົາສແວງຫາແຕ່ຜົນປໂຍດຂອງຕົນເອງໃນຊຸມຊົນ? |

## 3. <u>ຟີລິບປອຍ 2:5-11</u>

*[5]ເຈົ້າທັງຫລາຍຈົ່ງມີນ້ຳໃຈຕໍ່ກັນເໝືອນຢ່າງທີ່ມີໃນພຣະເຢຊູຄຣິດ. [6]ພຣະອົງຊົງສະພາບຂອງພຣະເຈົ້າແຕ່ບໍ່ໄດ້ຊົງຖືວ່າການເທົ່າທຽມກັບພຣະເຈົ້ານັ້ນເປັນສິ່ງທີ່ຕ້ອງຍຶດຫວງໄວ້. [7]ແຕ່ໄດ້ກັບຊົງຍອມສລະແລະຊົງຮັບສະພາບຂ້ອຍຂ້າຊົງຖືກໍາເນີດເປັນມະນຸດ. [8]ແລະເມື່ອຊົງປາກົດພຣະອົງໃນສະພາບມະນຸດແລ້ວພຣະອົງກໍຊົງຖ່ອມພຣະອົງລົງຍອມເຊື່ອຟັງຈົນເຖິງມໍຣະນາຄືເຖິງຄວາມມໍຣະນາທີ່ໄມ້ກາງແຂນ. [9]ເຫດສະນັ້ນພຣະເຈົ້າຈຶ່ງໄດ້ຊົງຍົກພຣະອົງຂຶ້ນເຖິງທີ່ສູງສຸດແລະໄດ້ຊົງປະທານພຣະນາມນັ້ນຊຶ່ງຢູ່ເໜືອນາມທັງປວງໃຫ້ແກ່ພຣະອົງ. [10]ເພື່ອເພາະພຣະນາມນັ້ນທຸກຫົວເຂົ່າໃນສວັນ, ເທິງແຜ່ນດິນໂລກ, ແລະໃຕ້ພື້ນດິນກໍດີຈະໄດ້ຄຸເຂົ່າລົງຂາບພຣະເຢຊູ. [11]ເພື່ອທຸກລີ້ນຈະຍອມຮັບວ່າ "ພຣະເຢຊູຊົງເປັນອົງພຣະຜູ້ເປັນເຈົ້າ" ອັນເປັນການຖວາຍພຣະກຽດແກ່ພຣະບິດາເຈົ້າ.*

ຖ້າທ່ານຢາກຮູ້ວ່າການຖ່ອມໃຈແລະການບໍ່ເຫັນແກ່ຕົວເປັນຄືແນວໃດ? ເລີ້ມຕົ້ນອ່ານຂໍ້ 5, ອາຈານໂປໂລຊີ້ໃສ່ພຣະເຢຊູທີ່ເປັນຕົວຢ່າງອັນສົມບູນແບບຂອງຄວາມຄິດທີ່ພວກເຮົາຕ້ອງການ ແລະຄວາມຖ່ອມໃຈທີ່ພວກເຮົາສົມຄວນສແວງຫາ. ພຣະທັມຟີລິບປອຍ 2:5-11 ເນັ້ນໜັກຄວາມຈິງຫຼັກຄໍາສອນທີ່ສໍາຄັນແລະໃຫ້ຮາກຖານສໍາລັບການດໍາລົງຊີວິດຄຣິສຕຽນ ທັງໝົດນີ້ຖືກບັນຈຸໄວ້ໃນເພງສັຣເສີນ. ບົດເພງໄດ້ນໍາເຮົາເຂົ້າມາໃຊ້ທັ້ງການນະມັສການແລະການເຮັດຕາມ. ສິ່ງນີ້ເປັນປໂຍດ, ດ້ວຍເຫດວ່າຍິ່ງເຮົາໄດ້ເຫັນພຣະສະງ່າຣາສີຂອງພຣະເຢຊູແລະເຮັດຕາມພຣະລັກສະນະຂອງພຣະອົງຫຼາຍເທົ່າໃດ, ຍິ່ງເຮົາຈະຣວມເປັນອັນນຶ່ງອັນດຽວກັນພາຍໃນຄຣິສຕະຈັກຫຼາຍເທົ່ານັ້ນ.

ຄວາມອ່ອນນ້ອມຖ່ອມຕົນຂອງພຣະເຢຊູເປັນຫນ້າມະຫັດສະຈັນ! ອົງພຣະເຢຊູເອງຊົງກ່າວວ່າ "ເພາະບຸດມະນຸດນັ້ນບໍ່ໄດ້ມາໃຫ້ຄົນອື່ນປະຕິບັດຕົນ ແຕ່ມາເພື່ອປະຕິບັດເຂົາແລະປະທານຊີວິດຂອງຕົນໃຫ້ເປັນຄ່າໄຖ່ຄົນຈໍານວນຫລາຍ." (ມາຣະໂກ 10:45). ນັ້ນແມ່ນແນວຄວາມຄິດທີ່ພວກເຮົາທັງຫຼາຍຈໍາເປັນຕ້ອງມີ.

ຍັງຢູ່, ຢ່າໃຫ້ຄວາມອ່ອນນ້ອມຖ່ອມຕົນຂອງພຣະເຢຊູສໍາຄັນກວ່າພຣະອໍານາດຂອງພຣະອົງ. ດັ່ງອາຈານໂປໂລໄດ້ບັນທຶກໄວ້, ອົງພຣະເຢຊູຊົງເປັນທີ່ຍົກຍ້ອງສັຣເສີນ "ສູງກວ່າບັນດາຜູ້ປົກຄອງ, ຜູ້ມີອໍານາດ, ຜູ້ມີຣິດເດດ, ຜູ້ມີອາ

ນຸພາບ ແລະເໜືອກວ່ານາມຊື່ທັງປວງທີ່ເຂົາເອີ່ຍຂຶ້ນ ບໍ່ແມ່ນແຕ່ໃນສມັຍນີ້ເທົ່ານັ້ນ ແຕ່ວ່າໃນສມັຍທີ່ຈະມາເຖິງດ້ວຍ" (ເອເຟໂຊ 1:21). ເວົ້າອີກຢ່າງນຶ່ງ, ພຣະເຢຊູຊົງປົກຄອງເໜືອທຸກສິ່ງທັງໝົດ ແລະທຸກໆຄົນຕ້ອງໄດ້ໃຫ້ການ (ຄືມີຄວາມຮັບຜິດຊອບ) ຕໍ່ພຣະອົງ.

| |
|---|
| ດ້ວຍວິທີໃດທີ່ພວກເຮົາຈະເຮັດວຽກຮ່ວມກັນເພື່ອເຊື່ອຟັງປະຕິບັດຕາມຄໍາສັ່ງຂອງອາຈານໂປໂລໃນຂໍ້ 5? |

## ນໍາໃຊ້ໃນຊີວິດ

ບາດກ້າວແນວໃດທີ່ທ່ານສາມາດເຮັດເພື່ອສະທ້ອນເຖິງຄວາມອ່ອນນ້ອມຖ່ອມຕົນຂອງອົງພຣະເຢຊູ? ຈົ່ງພິຈາຣະນາເບິ່ງຄໍາແນະນໍາດັ່ງຕໍ່ລົງໄປນີ້:

- **ທູນຂໍຄວາມຊ່ອຍເຫຼືອ.** ທູນຂໍຕໍ່ພຣະເຈົ້າທຸກໆວັນໃຫ້ພຣະອົງຊົງເມດຕາຊ່ວຍເຫຼືອທ່ານໃຫ້ມີຄວາມມຸ້ງໝາຍໃນຄົນອື່ນ. ອະທິຖານ ທູນຂໍໃຫ້ພຣະອົງຊ່ວຍເຫຼືອໃຫ້ທ່ານເປັນຜູ້ຮັບໃຊ້ດ້ວຍຄວາມຍິນດີ.

- **ຈົດຈໍາພຣະຄໍາ ຟີລິບປອຍ 2:5 -11.** ເພງສັຣເສີນຂອງອາຈານໂປໂລ ແມ່ນການຈົດຈໍາໃນສມອງ ແລະເລົ່າຄືນຫຼັງໂດຍຊາວຄຣິສຕຽນສມັຍເລີ້ມຕົ້ນ. ພວກເຮົາສົມຄວນເອົາເປັນຕົວຢ່າງ: ບັນທຶກໄວ້. ພິຈາຣະນາໄຕ່ຕອງ. ຈົດຈໍາໄວ້ໃນໃຈ ໃນສມອງ...

- **ຕອບສນອງຄວາມຈໍາເປັນ.**
  ຈົ່ງຊອກຫາໃຜຜູ້ນຶ່ງໃນຄຣິສຕະຈັກຂອງທ່ານຊຶ່ງຕ້ອງການປະສົບການຮັບພຣະພອນຈາກການຮັບໃຊ້ຄຣິສຕຽນ, ແລະໃຫ້ຮັບໃຊ້ຄົນນັ້ນໃນອາທິດນີ້ດ້ວຍຄວາມຖ່ອມໃຈ. ຈົ່ງຈໍາໄວ້ວ່າ ໃຫ້ຮັບໃຊ້ໂດຍທາງສ່ວນຕົວ (ບໍ່ອວດອ້າງ), ແລະ ຈົ່ງຈໍາໄວ້ວ່າ ໃຫ້ຮັບໃຊ້ແກ່ຜູ້ທີ່ບໍ່ສາມາດຈ່າຍຄ່າທົດແທນຄືນແກ່ທ່ານ.

ມີຄົນຫຼວງຫຼາຍໃນໂລກນີ້ທີ່ຈະບອກທ່ານວ່າຄວນຈະປະພຶດປະຕິບັດຕົນຢ່າງໃດ. ຢ່າໄດ້ງຽງຫູຟັງ. ແຕ່ກົງກັນຂ້າມ, ໃຫ້ທ່ານຈົດຈໍ່ຕັ້ງໃຈໃນການພັດທະນາຄວາມສັມພັນຂອງທ່ານກັບອົງພຣະເຢຊູ ແລະປ່ອຍໃຫ້ພຣະອົງຊົງສໍາແດງໃຫ້ທ່ານໄດ້ເຫັນວິຖີທາງທີ່ດີທີ່ສຸດໃນການດໍາລົງຊີວິດຂອງທ່ານ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ໂດຍ SSK**